ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 288/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 03 ເມສາ 2025

# ຂໍ້ຕົກລົງ
# ວ່າດ້ວຍການປັບປຸງມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 571/ຫສນຍ, ລົງວັນທີ 02 ເມສາ 2025;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເນື້ອໃນການປັບປຸງມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 155/ທຫລ, ລົງວັນທີ 19 ກຸມພາ 2025 ເພື່ອໃຫ້ຈະແຈ້ງ ແລະ ຮັບປະກັນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ມີຄວາມຄ່ອງຕົວ ແລະ ສອດຄ່ອງກັບສະພາບການຕົວຈິງ.

**ມາດຕາ 2 ມາດຕາຂອງຂໍ້ຕົກລົງທີ່ມີການປັບປຸງ**

ເນື້ອໃນມາດຕາຂອງຂໍ້ຕົກລົງ ທີ່ມີການປັບປຸງ ມີ ດັ່ງນີ້:

**ມາດຕາ 10 ການໂອນເງິນ**

ເຈົ້າຂອງບັນຊີເງິນຝາກ ສາມາດໂອນເງິນຜ່ານບັນຊີເງິນຝາກເງິນຕາຕ່າງປະເທດໃນສະກຸນດຽວກັນເທົ່ານັ້ນ ໂດຍປະຕິບັດ ດັ່ງນີ້:

1. ການໂອນເງິນ ລະຫວ່າງບັນຊີເງິນຝາກເງິນຕາຕ່າງປະເທດ ອອກຊື່ຕ່າງກັນ ມີຄ່າທຳນຽມການໂອນເງິນ ຈາກທະນາຄານທຸລະກິດຕົ້ນທາງ ສູນຈ້ຳສາມ ສ່ວນຮ້ອຍ (0.3%) ຂອງມູນຄ່າທຸລະກຳ ແຕ່ບໍ່ຫຼຸດ ໜຶ່ງ (1) ໂດລາສະຫະລັດ ຫຼື ທຽບເທົ່າ ແລະ ບໍ່ເກີນ ສາມສິບ (30) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ໜຶ່ງທຸລະກຳ ໂດຍປະຕິບັດໃນແຕ່ລະກໍລະນີ ດັ່ງນີ້:

1.1. ບັນຊີເງິນຝາກເງິນຕາຕ່າງປະເທດຂອງບຸກຄົນ:

1.1.1. ຈຳນວນບໍ່ເກີນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ວັນ ຕ້ອງລະບຸຈຸດປະສົງຂອງການໂອນເງິນ;

1.1.2. ຈຳນວນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າຂຶ້ນໄປ ຕໍ່ວັນ ຕ້ອງລະບຸຈຸດປະສົງຂອງການໂອນເງິນ ແລະ ຄັດຕິດເອກະສານທີ່ກ່ຽວຂ້ອງ ຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ;

1.2. ບັນຊີເງິນຝາກເງິນຕາຕ່າງປະເທດຂອງວິສາຫະກິດ ແລະ ການຈັດຕັ້ງ:

1.2.1. ຈຳນວນບໍ່ເກີນ ໜຶ່ງແສນ (100,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ວັນ ຕ້ອງລະບຸຈຸດປະສົງຂອງການໂອນເງິນ;

1.2.2. ຈຳນວນ ໜຶ່ງແສນ (100,000) ໂດລາສະຫະລັດ ຫຼື ທຽບເທົ່າຂຶ້ນໄປ ຕໍ່ວັນ ຕ້ອງລະບຸຈຸດປະສົງຂອງການໂອນເງິນ ແລະ ຄັດຕິດເອກະສານທີ່ກ່ຽວຂ້ອງ ຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ.

2. ການໂອນເງິນ ລະຫວ່າງບັນຊີເງິນຝາກເງິນຕາຕ່າງປະເທດ ມີຄ່າທຳນຽມການໂອນເງິນ ຕາມການກຳນົດຂອງທະນາຄານທຸລະກິດ ໃນແຕ່ລະກໍລະນີ ດັ່ງນີ້:

2.1. ການໂອນເງິນ ລະຫວ່າງບັນຊີເງິນຝາກເງິນຕາຕ່າງປະເທດ ອອກຊື່ດຽວກັນ;

2.2. ການໂອນເງິນ ລະຫວ່າງທະນາຄານທຸລະກິດກັບລູກຄ້າຂອງຕົນ ໃນຂອບເຂດທຸລະກິດການທະນາຄານ ເປັນຕົ້ນ ການໃຫ້ ຫຼື ຊຳລະຄືນ ເງິນກູ້, ການຊຳລະດອກເບ້ຍເງິນຝາກ ແລະ ເງິນກູ້, ການຊຳລະຄ່າທຳນຽມ ແລະ ຄ່າບໍລິການ;

2.3. ການໂອນເງິນ ເພື່ອການ ຊື້ ຂາຍ, ການຊຳລະດອກເບ້ຍ, ການຊຳລະຄ່າທຳນຽມ ແລະ ຄ່າບໍລິການ ທີ່ກ່ຽວຂ້ອງກັບຫຼັກຊັບ, ພັນທະບັດ ຢູ່ ທຫລ, ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ;

2.4. ການປະຕິບັດພັນທະຕໍ່ລັດ;

2.5. ການໂອນເງິນລະຫວ່າງຜູ້ໃຫ້ບໍລິການຊຳລະເງິນທີ່ບໍ່ແມ່ນທະນາຄານທຸລະກິດ ກັບລູກຄ້າຂອງຕົນ;

2.6. ການໂອນເງິນຕາມການກຳນົດ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ.

ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ປ່ຽນແທນເນື້ອໃນມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງບັນຊີເງິນຝາກເງິນຕາຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 155/ທຫລ, ລົງວັນທີ 19 ກຸມພາ 2025.

ມາດຕາ 4 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ຮັກສາການຜູ້ອໍານວຍການ
ຮອງຜູ້ອໍານວຍການ

ອາລຸນ ບຸນຍົງ